ໂຄງການສົ່ງເສີມການຮຽນຮູ້ກ່ຽວກັບທີ່ດິນເພື່ອເພີ່ມຄວາມໝັ້ນຄົງທາງດ້ານສະບຽງອາຫານ
Land learning Initiative for Food security Enhancement Project (LIFE Project)



# ຝຶກອົບຮົມແບບໃກ້ຊິດ ຫົວຂໍ້: ການເສີມສ້າງຄວາມສົມດູນທາງດ້ານທັກສະໃນການແກ້ໄຂບັນຫາ ແລະ ການໄກ່ເກ່ຍໃຫ້ພະນັກງານວິຊາການ ເພື່ອເສີມຂະຫຍາຍການມີສ່ວນຮ່ວມຂອງປະຊາຊົນໃນຂະແໜງການທີ່ດິນ

## ທ່ານຈະຮຽນຮູ້ຫຍັງແດ່?

- ໄດ້ທັກສະ ແລະ ວິທີການທົບທວນ, ການວິເຄາະ ແລະ ການຈັດລຽງບັນຫາ ບັນຫາກ່ຽວກັບວຽກງານຈັດສັນ, ສຳຫຼວດທີ່ດິນ ແລະ ອອກໃບຕາດິນ;
- ພັດທະນາທັກສະໃນການແກ້ໄຂບັນຫາ, ການໄກ່ເກ່ຍ ແລະ ການໃຫ້ຄຳແນະນຳປະຊາຊົນໃນການແກ້ໄຂບັນຫາກ່ຽວກັບທີ່ດິນ;
- ຮຽນຮູ້ ທັກສະທີ່ຫຼາກຫຼາຍໃນການກຽມຄວາມພ້ອມ ແລະ ການສ້າງຄວາມດຸນດ່ຽງໃນການຈັດການບັນຫາ;
- ຮຽນຮູ້ ມາດຕາກົດໝາຍຕ່າງໆ ທີ່ກ່ຽວຂ້ອງກັບວຽກງານຈັດສັນ, ສຳຫຼວດທີ່ດິນ ເພື່ອໂຄງການອອກໃບຕາດິນ ເຊັ່ນ: ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ນະໂຍບາຍອື່ນໆ ທີ່ກ່ຽວຂ້ອງ.




## ວາລະຝຶກອົບຮົມມີຫຍັງແດ່?

ຝຶກອົບຮົມແບບໃກ້ຊິດ ໃຊ້ເວລາ 4 ວັນ:

- 1 ວັນ ສົນທະນາ-ສັງລວມ ແລະ ຈັດລຽງບັນຫາ;
- 3 ວັນ ປ່ອນອີງທາງດ້ານກົດໝາຍ ແລະ ນະໂຍບາຍ, ການສ້າງຄວາມສົມດູນແກ່ຜູ້ມີສ່ວນຮ່ວມໃນວຽກງານທີ່ດິນ.

## ວິທີການດຳເນີນງານມີແນວໃດແດ່?

- *ເຕັກນິກວິທີການຮຽນຮູ້ແບບມີສ່ວນຮ່ວມ ແລະ ມີປະຕິກິລິຍາໂຕ້ຕອບ;*
- *ຝຶກອົບຮົມແມ່ນດຳເນີນໂດຍຄູຝຶກຫຼັກ ທີ່ໄດ້ຮັບການອົບຮົມ, ມີຄວາມ ດ້ານກົດໝາຍ ແລະ ມີປະສົບການເຮັດວຽກນຳຊຸມຊົນ;*
- *ເຄື່ອງມືປະກອບດ້ວຍແຜນບົດສອນ, ວິທີການທີ່ຫຼາກຫຼາຍ ແລະ ອຸປະກອນ.*

## ເນື້ອໃນຂອງຫຼັກສູດມີຫຍັງແດ່?

- ການທົບທວນ, ສັງລວມ ແລະ ຈັດລຽງບັນຫາທີ່ກ່ຽວຂ້ອງກັບວຽກງານທີ່ດິນ;
- ບັນດານິຕິກຳ ແລະ ແຜນງານຕ່າງໆ ທີ່ກ່ຽວຂ້ອງກັບວຽກງານຈັດສັນ, ສຳຫຼວດທີ່ດິນ ແລະ ອອກໃບຕາດິນ;
- ການກຽມຄວາມພ້ອມຂອງທີມງານທາງດ້ານວິຊາການ ແລະ ດ້ານນິຕິກຳ ໃນການແກ້ໄຂບັນຫາ;
- ຮູບແບບທີ່ເໝາະສົມໃນການແກ້ໄຂບັນຫາ ແລະ ຂໍ້ຂັດແຍ່ງເລື່ອງທີ່ດິນ;
- ວິທີການສົ່ງຕໍ່ຂໍ້ມູນ ແລະ ປະສານງານກັບອຳນາດການປົກຄອງຂັ້ນສູງກວ່າ.

## ສະເໜີຂໍຮັບການຝຶກອົບຮົມແບບໃກ້ຊິດໄດ້ແນວໃດ?

*ກ່ອນຝຶກອົບຮົມແບບໃກ້ຊິດ:*

- **4 ອາທິດລ່ວງໜ້າ:** ທ່ານຕ້ອງສົ່ງໜັງສືສະເໜີ ເພື່ອເຊີນໃຫ້ໂຄງການໄລຟ໌ ໄປຈັດຝຶກອົບຮົມແບບໃກ້ຊິດ ໃຫ້ແກ່ອົງກອນຂອງທ່ານ ແລະ ຄູ່ຮ່ວມງານທ້ອງຖິ່ນ;
- **3 ອາທິດລ່ວງໜ້າ**: ສົ່ງແຜນບົດຮຽນ ໃຫ້ແກ່ຄູ່ຮ່ວມງານພາກລັດ ແລະ ແບ່ງປັນຄຳຄິດເຫັນທີ່ມີ ຈາກອົງກອນຂອງທ່ານ ຫຼື ຈາກຄູ່ຮ່ວມງານທ້ອງຖິ່ນ ໃຫ້ແກ່ໂຄງການໄລຟ໌;
- **2 ອາທິດລ່ວງໜ້າ**: ສົ່ງລາຍຊື່ບ້ານເພື່ອເຮັດຝຶກອົບຮົມທົດລອງ, ສະຖານທີ່, ໄລຍະທາງ, ລວມທັງເຜົ່າ ແລະ ກຳນົດລະອຽດວ່າ ຈຳເປັນຕ້ອງມີລ່າມແປພາສາ ຫຼື ບໍ່;
- **1 ອາທິດລ່ວງໜ້າ**: ແຈ້ງໃຫ້ໂຄງການໄລຟ໌ຮູ້ ກ່ຽວກັບຈຳນວນຂອງບ້ານ ທີ່ອົງກອນຂອງທ່ານ ວາງແຜນຈະຈັດຝຶກອົບຮົມ ພາຍຫຼັງຝຶກອົບຮົມຈາກໂຄງການໄລຟ໌.

*ພາຍຫຼັງຝຶກອົບຮົມແບບໃກ້ຊິດ:*

- ແຈ້ງໃຫ້ໂຄງການໄລຟ໌ຮັບຮູ້ ກ່ຽວກັບການຝຶກອົບຮົມຂັ້ນຊຸມຊົນຂອງໜ່ວຍງານທ່ານ: ຊື່ບ້ານ, ເມືອງ, ຈຳນວນຂອງຜູ້ເຂົ້າຮ່ວມທັງໝົດ, ຈຳນວນຜູ້ເຂົ້າຮ່ວມທີ່ເປັນເພດຍິງ-ຊາຍ ແລະ ຊົນເຜົ່າ.

ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟັກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org